# ປະກາດສະຖານກົງສຸນໃຫຍ່ແຫ່ງຣາຊະອານາຈັກໄທປະຈໍາແຂວງສະຫວັນນະເຂດ

# ເລື່ອງ ການຈໍາໜ່າຍລົດສ່ວນກາງ
# ໂດຍວິທີການຂາຍທອດຕະຫຼາດ

---

ດ້ວຍສະຖານກົງສຸນໃຫຍ່ແຫ່ງຣາຊະອານາຈັກໄທປະຈໍາແຂວງສະຫວັນນະເຂດ ມີຄວາມປະສົງຈະຈໍາໜ່າຍລົດສ່ວນກາງ ຈໍານວນ 1 ຄັນ ໂດຍຈະດໍາເນີນການຂາຍທອດຕະຫຼາດດ້ວຍການປະມູນເປັນວາຈາ ຫຼື ລາຍລັກອັກສອນ ໂດຍມີລາຍລະອຽດ ດັ່ງນີ້

1. ລົດກະບະ ຍີ່ຫໍ້ Toyota Hilux Vigo Double Cab ລຸ້ນ KUN26L – PRMSYM ຂະໜາດຈັກ 3,000 ຊີຊີ ສີບອນທອງ ເປັນລົດຈັດຊື້ເມື່ອປີ ຄ.ສ. 2011 (ລາຍລະອຽດຊ້ອນທ້າຍປະກາດ)
2. ໄລຍະທາງການໃຊ້ງານ 182,788 ກິໂລແມັດ
3. ລາຄາຂັ້ນຕໍ່າທີ່ກໍານົດ ເປັນເງິນ 320,000 ບາດ
4. ວັນເປີດປະມູນ 26 ມັງກອນ 2022 ເວລາ 10.00 ໂມງ
5. ສະຖານທີ່ຈັດການປະມູນ ສະຖານກົງສຸນໃຫຍ່ແຫ່ງຣາຊະອານາຈັກໄທປະຈໍາແຂວງສະຫວັນນະເຂດ
6. ລົດດັ່ງກ່າວຂາຍຕາມສະພາບທີ່ປາກົດ ຜູ້ປະມູນຈະຕ້ອງອ່ານປະກາດຂາຍທອດຕະຫຼາດ ແລະ ເບິ່ງສະພາບລົດດ້ວຍຕົນເອງ ກ່ອນເຂົ້າປະມູນ ເມື່ອຕົກລົງເຂົ້າຮ່ວມປະມູນແລ້ວຖືວ່າຜູ້ເຂົ້າຮ່ວມປະມູນໄດ້ຮັບຊາບ ແລະ ຍອມຮັບເງື່ອນໄຂລາຍລະອຽດຕ່າງໆ ທີ່ຈະຂາຍທອດຕະຫຼາດຄັ້ງນີ້ ໂດຍຜູ້ປະມູນບໍ່ອາດຮຽກຮ້ອງ ຫຼື ຮ້ອງຂໍໃຫ້ສະຖານກົງສຸນໃຫຍ່ແຫ່ງຣາຊະອານາຈັກໄທດໍາເນີນການຢ່າງໃດຢ່າງໜຶ່ງເພື່ອປັບປຸງ ປ່ຽນແປງ ຫຼື ແກ້ໄຂລົດທີ່ປະມູນໃຫ້ມີສະພາບດີຂຶ້ນ
7. ຜູ້ປະມູນຈະຕ້ອງສະເໜີລາຄາບໍ່ຕໍ່າກວ່າລາຄາທີ່ສະຖານກົງສຸນໃຫຍ່ແຫ່ງຣາຊະອານາຈັກໄທໄດ້ກໍານົດໄວ້ ໂດຍຜູ້ປະມູນທີ່ໃຫ້ລາຄາສູງສຸດຈະເປັນຜູ້ໄດ້ສິດການຊື້ລົດດັ່ງກ່າວ ໂດຍຈະຕ້ອງຊໍາລະເງິນທັງໝົດ ຫຼື ວາງເງິນມັດຈໍາບໍ່ຕໍ່າກວ່າຮ້ອຍລະ 20 ຂອງລາຄາທີ່ປະມູນໄດ້ທັນທີ ທີ່ຝ່າຍການເງິນຂອງສະຖານກົງສຸນໃຫຍ່ແຫ່ງຣາຊະອານາຈັກໄທ ພ້ອມຫລັກຖານສະແດງຕົນ ໂດຍສະຖານກົງສຸນໃຫຍ່ແຫ່ງຣາຊະອານາຈັກໄທ ຈະອອກຫລັກຖານການຮັບເງິນໃຫ້ໄວ້ເປັນຫລັກຖານ ແລະ ຜູ້ປະມູນຈະຕ້ອງຊໍາລະສ່ວນທີ່ເຫລືອທັງໝົດພາຍໃນ 5 ວັນລັດຖະການນັບຖັດຈາກວັນທີ່ປະມູນ ແລະ ຕິດຕໍ່ຂໍຮັບລົດດັ່ງກ່າວໄດ້ ທີ່ສະຖານກົງສຸນໃຫຍ່ແຫ່ງຣາຊະອານາຈັກໄທ ພາຍໃນ 5 ວັນລັດຖະການ ນັບຖັດຈາກວັນທີ່ຊໍາລະເງິນຄົບຖ້ວນແລ້ວ
8. ຄ່າໂອນທະບຽນຫຼືກໍາມະສິດ ຄ່າທໍານຽມປ່ຽນປ້າຍທະບຽນລົດ ຄ່າຂົນສົ່ງ ຄ່າພາສີ ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ກ່ຽວຂ້ອງ ຜູ້ຊື້ເປັນຜູ້ຮັບຜິດຊອບທັງໝົດ
9. ຫາກຜູ້ປະມູນບໍ່ຊໍາລະເງິນຄົບຖ້ວນພາຍໃນວັນກໍານົດດັ່ງກ່າວ ຖືວ່າສະຫຼະສິດ ບໍ່ສາມາດຮຽກຮ້ອງຄ່າເສຍຫາຍຫຼືຄ່າໃຊ້ຈ່າຍໃດໆໄດ້
10. ຜູ້ປະມູນຕ້ອງບໍ່ເປັນຜູ້ມີປະໂຫຍດຮ່ວມກັນກັບຜູ້ປະມູນລາຍອື່ນ ຫຼືບໍ່ເປັນຜູ້ກະທໍາການອັນເປັນການຂັດຂວາງການແຂ່ງຂັນການປະມູນຢ່າງເປັນທໍາໃນການສະເໜີລາຄາຄັ້ງນີ້

11. ຜູ້ທີ່ເປັນຄະນະກຳມະການໃນການຂາຍທອດຕະຫຼາດລົດຄັ້ງນີ້ ບໍ່ມີສິດເຂົ້າສະເໜີລາຄາ ຫຼືໃຊ້ໃຫ້ຜູ້ອື່ນເຂົ້າສະເໜີລາຄາ

12. ຜູ້ທີ່ສົນໃຈ ແລະ ມີຄວາມປະສົງຈະເຂົ້າຮ່ວມການປະມູນລົດດັ່ງກ່າວ ກະລຸນາຕິດຕໍ່ສອບຖາມລາຍລະອຽດໄດ້ທີ່ ສະຖານກົງສຸນໃຫຍ່ແຫ່ງຣາຊະອານາຈັກໄທປະຈຳແຂວງສະຫວັນນະເຂດ ໃນວັນເວລາລັດຖະການ ຕັ້ງແຕ່ວັນທີ 11 – 25 ມັງກອນ 2022

ປະກາດ ວັນທີ 11 ມັງກອນ 2022

ສະຖານກົງສຸນໃຫຍ່ແຫ່ງຣາຊະອານາຈັກໄທປະຈຳແຂວງສະຫວັນນະເຂດ

เอกะสานຊ້ອນທ້າຍປະກາດ

ບັນຊີພາຫະນະ ແລະ ຂົນສິ່ງທີ່ຈະຂາຍທອດຕະຫຼາດ

ສະຖານກົງສຸນໃຫຍ່ແຫ່ງຣາຊະອານາຈັກໄທປະຈຳແຂວງສະຫວັນນະເຂດ

| ລຳດັບ | ທະບຽນ | ປະເພດລົດ | ລາຍລະອຽດລົດ | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|
| | | | ຍີ່ຫໍ້ | ລຸ້ນ | ປີ | ສີ | ເລກຈັກ | ເລກຖັງ | ລາຄາຂັ້ນຕ່ຳ |
| 1 | ສທ 14 - 12 | ລົດກະບະ ເຄື່ອງຈັກກາຊວນ 3,000 ຊີຊີ | Toyota Hilux Vigo Double Cab | KUN26L – PRMSYM | 2011 | ປອນທອງ | 1 KD5239029 | MROFZ29G901611751 | 320,000 ບາດ |